# Course: Agriculture Economics

# Week 1 Introduction

**Phavone Keodouangkham**

**Souphanouvong University**

# ອະທິບາຍກ່ຽວກັບວິຊາ

- ສຶກສາລັກສະນະທ່າອ່ຽງການປ່ຽນແປງການຜະລິດສິນຄ້າກະສິກຳ
- ການຜະລິດສິນຄ້າກະສິກຳ
- ການຜະລິດສິນຄ້າກະສິກຳພາຍໃຕ້ຄວາມສ່ຽງ
- ສິນເຊື່ອເພື່ອການກະສິກຳ
- ຕົ້ນທຶນລາຍຮັບ, ກຳໄລ, ອຸປະສົງ ແລະ ອຸປະທານສິນຄ້າກະສິກຳ
- ຕະຫຼາດ ແລະ ການຕະຫຼາດ
- ສິນຄ້າກະເສດລ່ວງໜ້າ
- ລາຄາສິນຄ້າ ແລະ ນະໂຍບາຍສິນຄ້າກະສິກຳ

# ຈຸດປະສົງຂອງວິຊາ

- ເພື່ອໃຫ້ນັກສຶກສາມີຄວາມຮູ້ ແລະ ຄວາມສາມາດ ແລະ ຈະລິຍະທຳໃນການນຳຫຼັກວິຊາເສດຖະສາດກະສິກຳມາປະຍຸກໃຊ້ໃນການແກ້ໄຂບັນຫາ
- ເພີ່ມຄຸນຄ່າລະບົບເສດຖະກິດກະສິກຳທຸກຂັ້ນ
- ເພື່ອໃຫ້ນັກສຶກສາພັດທະນາຄວາມຮູ້ດ້ານກະສິກຳ, ເພື່ອສະເໜີແນວຄວາມຄິດຕາມການສຶກສາສູ່ສັງຄົມ
- ເພື່ອໃຫ້ນັກສຶກສາ ສາມາດປັບຕົວ ແລະ ແນວຄວາມຄິດໃຫ້ທັນກັບການປ່ຽນແປງທີ່ເກີດຂຶ້ນ ເນັ້ນປະຍຸກຫຼັກທິດສະດີທາງເສດຖະສາດກັບຜາກະສິກຳເພື່ອແກ້ໄຂບັນຫາເສດຖະກິດ

# Introduction

- ❖ ບົດທີ 1: ບົດນຳ
- ❖ ບົດທີ 1 (ຕໍ່) ລັກສະນະພິເສດຂອງເສດຖະກິດກະສິກຳ ແລະ ຮູບແບບການພັດທະນາຂອງເສດຖະກິດ
- ❖ ບົດທີ 2 ອຸປະສົງ ແລະ ອຸປະທານສິນຄ້າກະເສດ
- ❖ ບົດທີ 3 ທິດສະດີການຜະລິດ ແລະ ຫລັກເກນໃນການຕັດສິນໃຈ
- ❖ ບົດທີ 4 ການຜະລິດສິນຄ້າກະສິກຳພາຍໃຕ້ຄວາມສ່ຽງ
- ❖ ບົດທີ 5 ສິນເຊື່ອກະສິກຳ
- ❖ ບົດທີ 6 ຕົ້ນທຶນການຜະລິດ ລາຍຮັບ ແລະ ກຳໄລ
- ❖ ບົດທີ 7 ຕະຫຼາດ ແລະ ການຕະຫຼາດ
- ❖ ບົດທີ 8 ຕະຫຼາດສິນຄ້າກະເສດລ່ວງໜ້າ
- ❖ ບົດທີ 9 ລາຄາສິນຄ້າກະເສດ

# ລາຍວິຊາ: ເສດຖະສາດກະສິກຳ

# ອາທິດທີ 1 ບົດນຳ

**Phavone Keodouangkham**

**Souphanouvong University**

- ພາກການກະເສດສ່ວນໃຫ່ຍກ່ຽວຂ້ອງກັບຄວາມໝັ້ນຄົງທາງອາຫານຜະລິດຕະພັນສິນຄ້າກະເສດສ່ວນໃຫຍ່ລາຄາຕົກຕໍ່າໃນຂະນະທີ່ຕົ້ນທຶນການຜະລິດສູງ
- ຊາວກະສິກອນຂາດອຳນາດຕໍ່ລອງລາຄາປັດໄຈການຜະລິດ

# Introduction

ເສດຖະສາດກະສິກຳ ແມ່ນການນຳໃຊ້ຫຼັກການເສດຖະກິດເຂົ້າໃນຂົງເຂດກະສິກຳ. ເຂົ້າໃຈ ແລະ ວິເຄາະຂະບວນການຜະລິດ, ການຕະຫຼາດ, ບໍລິໂພກຜະລິດຕະພັນກະເສດ. **ເປົ້າໝາຍຕົ້ນຕໍແມ່ນເພີ່ມທະວີການຜະລິດ, ຫຼຸດຜ່ອນຕົ້ນທຶນ, ເພີ່ມລາຍຮັບໃຫ້ຊາວກະສິກອນ. ແລະຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກຢ່າງຍືນຍົງ**

# Introduction




## Economic structure

References: Keodouangkham et al., (2022). Agriculture Economics. Souphanoupovong University.

# ບົດທີ 1 ບົດນຳ

ສາຂາການກະສິກຳມີຄວາມສຳຄັນເປັນຢ່າງໃຫຍ່ຫຼວງ ຕໍ່ລະບົບເສດຖະກິດຂອງປະເທດກຳລັງພັດທະນາ ເພາະຜົນຜະລິດຈາກສາຂາກະສິກຳນຳມາໃຊ້ໃນການບໍລິໂພກ ແລະ ເປັນວັດຖຸດິບໃຫ້ແກ່ການຜະລິດຂອງສາຂາອຸດສາຫະກຳ. ນອກຈາກນີ້ສາຂາກະສິກຳຍັງເປັນແຫລ່ງສຳຄັນໃນການຈ້າງງານ ບົດບາດຂອງກະສິກຳຍັງຜູກພັນຢ່າງຊະນິດແໜ້ນກັບເສດຖະກິດຂອງປະເທດ ໂດຍສະເພາະໃນການພັດທະນາເສດຖະກິດ.

# ຄວາມໝາຍຂອງວິຊາເສດຖະສາດ

- ມາຣແຊລ (1978) ກ່າວວ່າ: ເສດຖະສາດເປັນສາດ ທີ່ວ່າດ້ວຍການດຳລົງຊີວິດຕາມປົກກະຕິຂອງມະນຸດ ໂດຍສຶກສາເຖິງການກະທຳຂອງສັງຄົມ ແລະ ຂອງແຕ່ລະບຸກຄົນ ສະເພາະສ່ວນທີ່ມີຄວາມສຳພັນຢ່າງ ແໜ້ນແຟ້ນທີ່ສຸດ ກັບການບັນລຸເຖິງຄວາມຢູ່ດີກິນດີ ແລະ ການໃຊ້ວັດຖຸປັດໄຈເພື່ອການຢູ່ດີກິນດີ.

- ແຊມມວນສັນ (1980) ໄດ້ໃຫ້ຄວາມໝາຍວ່າ: ເສດຖະສາດ ຄືການສຶກສາເຖິງວິທີການທີ່ມະນຸດ ແລະ ສັງຄົມຕັດສິນໃຈເລືອກໃຊ້ຊັບພະຍາກອນການຜະລິດ ອັນຫາມາໄດ້ຍາກທີ່ໃຊ້ເພື່ອຜະລິດສິນຄ້າ ແລະ ບໍລິການ ແລະ ແຈກຈ່າຍສິນຄ້າໄປເພື່ອບໍລິໂພກບໍ່ວ່າໃນປັດຈຸບັນ ຫຼື ອະນາຄົດລະຫວ່າງປະຊາຊົນ ແລະ ກຸ່ມຄົນຕ່າງໆ ໃນສັງຄົມ.

- ແມດຄອນເນລ (1978) ໃຫ້ຄວາມໝາຍວ່າ: ເສດຖະສາດຄື ສັງຄົມສາດທີ່ກ່ຽວກັບບັນຫາການໃຊ້ ຫຼື ບໍລິຫານຊັບພະຍາກອນອັນຫາຍາກ ເພື່ອໃຫ້ເກີດຄວາມພໍໃຈຫຼາຍທີ່ສຸດແກ່ສັງຄົມ ຊຶ່ງມີຄວາມຕ້ອງການບໍ່ສິ້ນສຸດ.

# ຄວາມໝາຍ ແລະ ຄວາມສຳຄັນຂອງກະສິກຳ

## ນິຍາມຂອງການກະສິກຳ

ເບື້ອງຕົ້ນ ກະສິກຳແມ່ນຖືກກຳນົດໃຫ້ແມ່ນການເຄື່ອນໄຫວຂອງມະນຸດຢ່າງເປັນລະບົບ ເພື່ອໃຫ້ໄດ້ມາເຊິ່ງຜະລິດຕະພັນຈຳນວນໜຶ່ງ ທີ່ໃຊ້ເຂົ້າໃນການດຳລົງຊີວິດຢ່າງປະຫຍັດມັດທະຍັດ, ຈຸດປະສົງຂອງການເຄື່ອນຍ້າຍດັ່ງກ່າວແມ່ນເພື່ອພັດທະນາລະບົບສິ່ງທີ່ມີຊີວິດແບບຍືນຍົງ.

# ຄວາມໝາຍ ແລະ ຄວາມສຳຄັນຂອງກະສິກຳ

ການເຄື່ອນໄຫວຂອງການກະສິກຳອອກເປັນ 3 ບາດກ້າວ

ບາດກ້າວທີ 1: ແມ່ນການປະເມີນຄ່າສິ່ງທີ່ມີຊີວິດ

ບາດກ້າວທີ 2: ແມ່ນເລີ່ມຕົ້ນປະຕິບັດງານ

ບາດກ້າວທີ 3: ແມ່ນກະກຽມສະຖານທີ່ເພື່ອດຳເນີນການຜະລິດ

# ຄວາມໝາຍ ແລະ ຄວາມສຳຄັນຂອງກະສິກຳ

ການກະສິກຳ ເປັນພາກເສດຖະກິດທີ່ສຳຄັນຂອງປະເທດກຳລັງພັດທະນາ ປະຊາກອນ ແລະ ແຮງງານສ່ວນໃຫ່ຍຂອງປະເທດກຳລັງພັດທະນາອາໄສ ແລະ ເພິ່ງພາວ່ານັ້ນການກະສິກຳຍັງເປັນແຫລ່ງຜະລິດອາຫານ ເປັນວັດຖຸດິບຂອງອຸດສາຫະກຳ ແລະ ເປັນແຫລ່ງສະສົມທຶນເພື່ອການພັດທະນາເສດຖະກິດຂອງປະເທດ

# ຄວາມໝາຍ ແລະ ຄວາມສຳຄັນຂອງການກະສິກຳ

ບົດບາດຂອງການກະສິກຳ ໃນຖານະເປັນພາກເສດຖະກິດທີ່ສຳຄັນ ໄດ້ປ່ຽນແປງໄປຕາມກາລະເວລາ ຫຼື ຕາມຂະບວນການຂອງການພັດທະນາເສດຖະກິດ ໃນໄລຍະເລີ່ມຕົ້ນຂອງການພັດທະນານັ້ນ ແລະ ມີສ່ວນສະໜັບສະໜູນໃຫ້ກິດຈະກຳໃນສາຂາອື່ນໆ ເຊັ່ນ: ອຸດສາຫະກຳ, ຫັດຖະກຳ ແລະ ການບໍລິການ.

ເສດຖະກິດຂອງປະເທດຈະເພິ່ງພາການກະສິກຳເປັນສຳຄັນ ເມື່ອມີການຂະຫຍາຍຕົວທາງເສດຖະກິດຫຼາຍຂຶ້ນໃນອານາຄົດບົດບາດຂອງການກະສິກຳ ຈະຫຼຸດລົງຕາມລຳດັບຈົນເກືອບຈະບໍ່ມີຄວາມສຳຄັນ ໃນແງ່ຂອງການສ້າງລາຍໄດ້ລວມ ຫຼື ລາຍໄດ້ປະຊາຊາດ

# ຄວາມໝາຍຂອງເສດຖະສາດກະສິກຳ

- ໄດ້ມີນັກເສດຖະສາດໄດ້ໃຫ້ຄວາມໝາຍຂອງຄຳວ່າ ເສດຖະສາດກະສິກຳ ໄວ້ຫຼາຍຄວາມໝາຍດັ່ງນີ້:

ເສດຖະສາດກະສິກຳ ໝາຍເຖິງ ການສຶກສາເຖິງວິທີການຈັດສັນຊັບພະຍາກອນທີ່ມີຢູ່ຢ່າງຈຳກັດເພື່ອຜະລິດສິນຄ້າ ແລະ ບໍລິການທາງກະສິກຳ ທັງນີ້ເພື່ອສະໜອງຄວາມຕ້ອງການອັນມີຢູ່ຢ່າງບໍ່ຈຳກັດຂອງມະນຸດ ຫຼື ວິຊາທີ່ກ່ຽວຂ້ອງກັບການນຳເອົາຄວາມຮູ້ທາງທຸລະກິດເສດຖະສາດມາປະຍຸກກັບບັນຫາການກະສິກຳ ດັ່ງນັ້ນ ວິຊາເສດຖະສາດກະສິກຳຈຶ່ງເປັນສາຂາໜຶ່ງຂອງວິຊາເສດຖະສາດ.

# ຄວາມໝາຍຂອງເສດຖະສາດກະສິກຳ

- ເສດຖະສາດກະສິກຳ ເປັນສາຂາໜຶ່ງຂອງວິຊາເສດຖະສາດປະຍຸກ ໂດຍການນຳເສດຖະກິດທາງເສດຖະສາດໄປແກ້ໄຂບັນຫາການກະສິກຳ ດັ່ງນັ້ນ, ວິຊານີ້ຈຶ່ງເປັນວິຊາທີ່ສຶກສາເຖິງຄວາມສຳພັນຂອງຫຼັກເສດຖະກິດທາງເສດຖະສາດທີ່ມີຕໍ່ການກະສິກຳ ໂດຍເໜັ້ນໃສ່ຄວາມສຳຄັນໃນການແກ້ໄຂບັນຫາໃນລະດັບຕ່າງໆ ທີ່ກ່ຽວກັບການກະສິກຳ ເພື່ອໃຫ້ໄດ້ມາ ຊຶ່ງການຢູ່ດີກິນດີ.

# ຄວາມໝາຍຂອງເສດຖະສາດກະສິກຳ

ເສດຖະສາດກະສິກຳ ວິຊາການທີ່ນຳເອົາທຸລະກິດເສດຖະສາດມາໃຊ້ແກ້ໄຂບັນຫາເສດຖະກິດໃນສ່ວນການກະສິກຳ ຫຼື ບາງທ່ານໃຫ້ຄຳຈຳກັດຄວາມຂອງເສດຖະສາດກະສິກຳວ່າ ເປັນວິທະຍາສາດສັງຄົມປະຍຸກ ເພື່ອສຶກສາບັນຫາຕ່າງໆ ທີ່ກ່ຽວຂ້ອງກັບເສດຖະກິດການກະສິກຳ ເພື່ອຫາທາງແກ້ໄຂກັນຕໍ່ໄປ.

# ຄວາມໝາຍຂອງເສດຖະສາດກະສິກຳ

ເສດຖະສາດກະສິກຳ ເປັນການນຳເອົາຫຼັກເສດຖະສາດເຂົ້າມາທຳການວິເຄາະທາງດ້ານການກະສິກຳກ່ຽວກັບການຈັດສັນຊັບພະຍາກອນທາງການກະສິກຳທີ່ມີຢູ່ຢ່າງຈຳກັດ ຫຼື ນຳມາຜະລິດສິນຄ້າກະສິກຳ ເພື່ອໃຫ້ຕອບສະໜອງຄວາມຕ້ອງການຂອງຜູ້ບໍລິໂພກໄດ້ຫຼາຍທີ່ສຸດ ນອກຈາກນີ້ຍັງລວມໄປເຖິງການດຳເນີນນະໂຍບາຍຂອງລັດໃນດ້ານການຜະລິດ ການຈຳຜົນຜະລິດເພື່ອໃຫ້ເກີດຜົນປະໂຫຍດສູງສຸດແກ່ຜູ້ຜະລິດ ແລະ ຜູ້ບໍລິໂພກໂດຍສ່ວນລວມ.

# ຄວາມໝາຍຂອງເສດຖະສາດກະສິກຳ

ການກະສິກຳ ໝາຍເຖິງ ວິຊາທາງສັງຄົມສາດທີ່ມາປະຍຸກໃນການແກ້ໄຂບັນຫາຂອງມະນຸດວ່າຈະເລືອກໃຊ້ຄວາມຮູ້ທາງເທັກນິກ ແລະ ຊັບພະຍາກອນທີ່ມີຢູ່ຢ່າງຈຳກັດ ( ໄດ້ແກ່ ທີ່ດິນ, ແຮງງານ ທຶນ ແລະ ການຈັດການໃນການຜະລິດອາຫານ ແລະ ຜະລິດຕະພັນການກະສິກຳອື່ນໆ) ເພື່ອໄປຈັດສັນໃນການບໍລິໂພກໃຫ້ແກ່ມະນຸດໃນສັງຄົມໄດ້ຢ່າງໃດ.

# ຄວາມໝາຍຂອງເສດຖະສາດກະສິກຳ

ສະຫຼຸບໄດ້ວ່າ ເສດຖະສາດກະສິກຳ ເປັນສາຂາໜຶ່ງຂອງວິຊາເສດຖະສາດປະຍຸກທີ່ກ່ຽວຂ້ອງກັບການນຳເອົາຄວາມຮູ້ທາງທິດສະດີເສດຖະສາດ ປະຍຸກກັບບັນຫາດ້ານການກະສິກຳ ຫຼັກທິດສະດີເສດຖະສາດທີ່ໃຊ້ການຫຼາຍຄື ທິດສະດີເສດຖະສາດຈຸລະພາກມາປະຍຸກເພື່ອແກ້ໄຂບັນຫາລະດັບຕ່າງໆຂອງການກະສິກຳ ເປັນຕົ້ນວ່າ ການໃຊ້ຊັບພະຍາກອນທຳມະຊາດໃນການຜະລິດໃຫ້ມີປະສິດທິພາບຫຼາຍທີ່ສຸດການດຳເນີນງານດ້ານການຕະຫຼາດ ແລະ ລາຄາຜົນຜະລິດກະສິກຳ.

# ຄວາມໝາຍ ແລະ ຂອບເຂດຂອງເສດຖະກິດກະສິກຳ

## ເສດຖະກິດ?

- ເສດຖະກິດເປັນເລື່ອງທີ່ກ່ຽວຂ້ອງກັບການຜະລິດ,ການຄ້າຂາຍ ຫຼື ການ ແລກປ່ຽນ ແລະ ການບໍລິໂພກສິນຄ້າ ແລະ ບໍລິການ
- ເສດຖະກິດກະສິກຳຈຶ່ງໝາຍເຖິງການຜະລິດ ການຄ້າຂາຍ ແລະ ການບໍລິໂພກສິນຄ້າ ກະສິກຳ

# ຄວາມໝາຍ ແລະ ຂອບເຂດຂອງວິຊາເສດຖະສາດກະສິກຳ

- ເສດຖະສາດກະສິກຳເປັນເສດຖະສາດປະຍຸກ ເປັນການນຳກອບແນວຄວາມຄິດ ແລະ ທິດສະດີເສດຖະສາດມາປະຍຸກບັນຫາ ແລະ ເຂົ້າໃຈສະພາບ ແລະ ບັນຫາການກະເສດຕ່າງໆ
- ເສດຖະສາດກະສິກຳປະກອບດ້ວຍ 2 ສ່ວນຄື: ສ່ວນທີ່ເປັນທິດສະດີແລະສ່ວນທີ່ເປັນບັນຫາທາງກະສິກຳ

# ຄວາມເປັນມາຂອງວິຊາເສດຖະສາດກະສິກຳ

- ໃນສະໄໝດັ່ງເດີມນັ້ນການປະກອບອາຊີບຫລັກຂອງມະນຸດ ຄືການຜະລິດອາຫານສຳລັບບໍລິໂພກ ຊຶ່ງກໍ່ຄືການກະສິກຳນັ້ນເອງ ແຕ່ການຜະລິດໃນສະໄໝດັ່ງເດີມຢູ່ໃນວົງຈຳກັດເພື່ອບໍລິໂພກ ໃນຄົວເຮືອນເທົ່ານັ້ນສ່ວນທີ່ເຫຼືອຈາກການບໍລິໂພກຈຶ່ງນຳໄປແລກປ່ຽນກັບສິນຄ້າອື່ນ

# ຄວາມເປັນມາຂອງວິຊາເສດຖະສາດກະສິກຳ

ການສຶກສາວິຊາເສດຖະສາດກະສິກຳຈຶ່ງໄດ້ໃຫ້ຄວາມສົນໃຈບັນຫາການຕະຫຼາດຫຼາຍຂຶ້ນ ເຊັ່ນ ບັນຫາທາງດ້ານລາຄາຜະລິດຜົນການແຂ່ງຂັນຕະຫລອດຈົນໜ້າທີ່ທາງດ້ານການຕະຫຼາດຕ່າງໆ

ວິຊາເສດຖະສາດກະສິກຳ ໃນໄລຍະຫຼັງໆ ແຜ່ຂະຫຍາຍໄປຢ່າງກວ້າງຂວາງ ມີການນຳເອົາວິຊາເສດຖະສາດກະສິກຳໄປສອນໃນລະດັບອຸດົມສຶກສາທົ່ວໂລກ ເສດຖະສາດກະສິກຳປະກອບດ້ວຍສາຂາຕ່າງໆ ຫຼາຍສາຂາ ເຊັ່ນ: ເສດຖະສາດ ການຜະລິດທາງກະສິກຳ ການຈັດການຟາມ ການຕະຫຼາດ ແລະ ລາຄາຜະລິດຜົນກະສິກຳທຸລະກິດກະສິກຳນະໂຍບາຍກະສິກຳ ການພັດທະນາ ແລະ ການວາງແຜນກະສິກຳ ລວມທັງການວິໄຈກະສິກຳ ເປັນຕົ້ນ

# ຂອບເຂດຂອງວິຊາເສດຖະສາດກະສິກຳ

- ສາຂາກະສິກຳຈະກ່ຽວຂ້ອງກັບການປູກພືດ ແລະ ລ້ຽງສັດໂດຍອາໃສທຳມະຊາດທີ່ມີຈຳນວນຈຳກັດ
- ການກະສິກຳໃນປັດຈຸບັນໄດ້ປ່ຽນຮູບແບບໄປ ເນື່ອງຈາກການປ່ຽນແປງໂຄງສ້າງເສດຖະກິດກະສິກຳໄປເປັນອຸດສາຫະກຳ
- ການຈັດການຟາມ ແລະ ເສດຖະສາດກະສິກຳຜະລິດ (Farm Management and Production Economics)
- ເສດຖະສາດຊັບພະຍາກອນ (Resource Economics)
- ທຸລະກິດກະສິກຳ (Agricultural Finance)
- ການຕະຫຼາດກະສິກຳ ແລະ ລາຄາຜະລິດຜົນກະສິກຳ (Agricultural Marketing and Price)
- ທຸລະກິດກະສິກຳ (Agri - Business)
- ນະໂຍບາຍການກະສິກຳ (Agricultural Policy)

# ການຈັດການຟາມ ແລະ ເສດຖະສາດກະສິກຳຜະລິດ

- ການຈັດການຟາມ ເປັນສຶກສາທີ່ກ່ຽວກັບການຈັດຮູບແບບປະກອບຂອງຟາມ ແລະ ການດຳເນີນງານຟາມ ເພື່ອໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຈຳກັດ ຄື ທີ່ດິນ, ທຶນ ແລະ ແຮງງານໃຫ້ເກີດປະໂຫຍດສູງສຸດ
- ການຈັດຮູບແບບປະກອບຂອງຟາມ ໝາຍເຖິງ ງານທີ່ກ່ຽວຂ້ອງກັບການຄັດເລືອກຟາມ ການວາງແຜນ ການວາງລະບົບການເພາະປູກ ການເລືອກວິທີປະຕິບັດເພື່ອປ້ອງກັນການເຊື່ອມໂຊມຂອງຊັບພະຍາກອນການຜະລິດ
- ການດຳເນີນງານຟາມ ໝາຍເຖິງ ການປະຕິບັດງານຕາມແຜນການທີ່ໄດ້ວາງໄວ້ນັບຕັ້ງແຕ່ການຜະລິດ ການເກັບຮັກສາ ການແປຮູບ ການຈຳໜ່າຍ ການເກັບລວບລວມຂໍ້ມູນທາງດ້ານຕ່າງໆ ການລົງບັນຊີ ຕະລອດຈົນການປະເມີນຜົນງານ ແລະ ອື່ນໆ

- **ເສດຖະສາດການຜະລິດ ເປັນວິຊາທີ່ສຶກສາເຖິງການຊີ້ຊ່ອງທາງເລືອກແນວທາງໃຫ້ແກ່ຜູ້ຜະລິດ ຫຼື ກະສິກຳໃນການໃຊ້ຊັບພະຍາກອນທີ່ມີຢູ່ຢ່າງຈຳກັດໃຫ້ມີປະສິດທິພາບຫຼາຍທີ່ສຸດ**

ດັ່ງນັ້ນ, ວິຊານີ້ຈຶ່ງມີຄວາມສຳຄັນຫຼາຍຕໍ່ເສດຖະກິດຂອງປະເທດ ແລະ ຜູ້ກ່ຽວຂ້ອງໃນການຜະລິດທາງກະສິກຳ ເພາະຄວາມຮູ້ທີ່ໄດ້ຮັບຈາກວິຊານີ້ ເຮັດໃຫ້ຜູ້ສຶກສາມີຄວາມຮູ້ທາງດ້ານເສດຖະສາດກ່ຽວກັບການຜະລິດ ແລະ ສາມາດນຳໄປສ້າງຄວາມເຂົ້າໃຈໃນບັນຫາ ແລະ ໃຫ້ຂໍ້ສະເໜີແນະນຳ ເພື່ອການແກ້ໄຂກ່ຽວກັບການຜະລິດທາງກະສິກຳ.

# ຄວາມສຳພັນລະຫວ່າງເສດການກະສິກຳ ກັບ ວິຊາອື່ນໆ



- **ເສດຖະສາດຊັບພະຍາກອນ**

ຊັບພະຍາກອນ ເປັນການສຶກສາເຖິງການຈັດສັນຊັບພະຍາກອນກະສິກຳ ທີ່ຈະຕ້ອງໃຊ້ໃນການຜະລິດສິນຄ້າກະສິກຳ ຊຶ່ງອາດຈະເປັນສິ່ງທີ່ເກີດຂຶ້ນມາເອງຕາມທຳມະຊາດ ເຊັ່ນ: ອາກາດ, ສາຍລົມ, ແສງແດດ, ນ້ຳຕາມແຫຼ່ງນ້ຳທຳມະຊາດເປັນຕົ້ນ ຫຼືອາດຈະເປັນຜົນມາຈາກຄວາມສາມາດຂອງມະນຸດທີ່ທຳການຜະລິດຂຶ້ນມາໃຊ້ ເຊັ່ນ: ເຄື່ອງຈັກ, ເຄື່ອງມື, ເທັກໂນໂລຢີຕ່າງໆ.

- **ການເງິນກະສິກຳ**

ການເງິນກະສິກຳ ຫຼື ຄັງກະສິກຳ ເປັນການສຶກສາກ່ຽວກັບການຫາ ການໃຊ້, ການຄວບຄຸມ ແລະ ການຈັດການການເງິນ ຫຼື ທຶນໃນທາງກະສິກຳ

ການສຶກສາອາດຈະສຶກສາໄດ້ທັງການເງິນໃນລະດັບຟາມ ແລະ ລະດັບປະເທດໂດຍມີທຶນເປັນຂອບເຂດ ການທີ່ທຸລະກິດກະສິກຳເຂົ້າມາມີບົດບາດສຳຄັນ ເນື່ອງຈາກຄວາມກ້າວໜ້າທາງເທັກໂນໂລຢີ ທາງກະສິກຳທີ່ມີການໃຊ້ທຶນສູງ ຊຶ່ງກ່ຽວຂ້ອງກັບກິດຈະກຳ ການກະສິກຳແທບທຸກປະເພດ ບໍ່ວ່າຈະເປັນການຜະລິດ ການໄດ້ຮັບມາ ແລະ ການໃຊ້ປັດໃຈການຜະລິດ ການຕະຫຼາດ ແລະ ລາຄາຜະລິດ ການກະສິກຳເພາະກິດຈະກຳເຫຼົ່ານີ້ມີທຶນ ຫຼື ຊັບພະຍາກອນອື່ນເຂົ້າໄປກ່ຽວຂ້ອງ ດັ່ງນັ້ນ, ຈຶ່ງຕ້ອງມີການຕັດສິນໃຈໃນທາງການເງິນທີ່ຖືກຕ້ອງ.

- **ການຕະຫຼາດກະສິກຳ ແລະ ລາຄາຜະລິດຜົນກະສິກຳ**

ການຕະຫຼາດສິນຄ້າກະສິກຳ ເປັນການດຳເນີນງານທີ່ເຮັດໃຫ້ສິນຄ້າ ຫຼື ບໍລິການເຄື່ອນຍ້າຍຈາກຈຸດທີ່ມີການຜະລິດເບື້ອງຕົ້ນ ຫຼື ຈຸດທີ່ມີການຜະລິດສິນຄ້າທາງກະສິກຳເປັນຄັ້ງທຳອິດໄປສູ່ແຫຼ່ງທີ່ມີການບໍລິໂພກຄັ້ງສຸດທ້າຍ ຫຼື ຜູ້ບໍລິໂພກຄົນສຸດທ້າຍ ຊຶ່ງໝາຍເຖິງການຜະລິດໄດ້ສິ້ນສຸດລົງແລ້ວ ການຕະຫຼາດຈຶ່ງເລີ່ມຕົ້ນ ຈຸດແຫຼ່ງຜະລິດສິນຄ້າທີ່ເຄື່ອນຍ້າຍອອກໄປສູ່ບໍລິໂພກ ໃນລັກສະນະຂອງສິນຄ້າທີ່ຜູ້ບໍລິໂພກຕ້ອງການໃນເວລາ ແລະ ສະຖານທີ່ ຕະຫຼາດຈົນໃນລະດັບລາຄາທີ່ຜູ້ບໍລິໂພກຍິນດີຈ່າຍເພື່ອໃຫ້ໄດ້ສິນຄ້ານັ້ນ ໆ ມາ.

- **ທຸລະກິດກະສິກຳ**

1) ທຸລະກິດກະສິກຳ ເປັນການສຶກສາທຸລະກິດທີ່ກ່ຽວຂ້ອງກັບການກະສິກຳທັງໝົດ ນັບຕັ້ງແຕ່ການຜະລິດການຈັດຈຳໜ່າຍປັດໃຈການຜະລິດ ການຜະລິດ ຜະລິດຜົນການກະສິກຳ ການແປຮູບ ການເກັບຮັກສາ ແລະ ການຈັດຈຳໜ່າຍຜະລິດຜົນ ແລະ ຜະລິດຜົນ

2) ໄດ້ຈາກສິນຄ້າກະສິກຳ ສິນຄ້າກະສິກຳມີຄວາມຈຳເປັນຕໍ່ການດຳລົງຊີບຂອງມະນຸດທັງໃນດ້ານອຸປະໂພກ ແລະ ບໍລິໂພກ ຈຳເປັນຕ້ອງມີບຸກຄົນຫຼາຍລຸ້ນຫຼາຍຝ່າຍເຂົ້າມາປະກອບທູລະກິດໃນດ້ານຕ່າງໆ ຕາມຄວາມສາມາດ ແລະ ຄວາມຖະນັດ ແລະ ມີການຕັດສິນໃຈໃນການທຳທຸລະກິດລ່ວງໜ້າເພື່ອສະນອງຄວາມຕ້ອງການຂອງຜູ້ບໍລິໂພກ ຍິ່ງໄປກວ່ານັ້ນການພັດທະນາເສດຖະກິດຂອງປະເທດຕ້ອງອາໃສການພັດທະນາທຸລະກິດກະສິກຳໃຫ້ກ້າວໜ້າ ແລະ ໝັ້ນຄົງ.

# ຄຳຖາມຄົ້ນຄວ້າ Home work

- ໃຫ້ນັກສຶກສາຍົກບັນຫາກ່ຽວກັບຂະແໜງການກະສິກຳໃນ ສປປ ລາວທີ່ເກີດຂຶ້ນໃນນາມເຮົາເປັນ ນສ ຈະມີແນວທາງປັບປຸງແກ້ໄຂບັນຫາແບບໃດເພື່ອເປັນການສົ່ງເສີມການພັດທະນາຂະແໜງການກະສິກຳ?
- ຈົ່ງຍົກໃຫ້ເຫັນບົດບາດທີ່ພົ້ນເດັ່ນຂອງຂະແໜງການກະສິກຳຕໍ່ກັບການຂະຫຍາຍຕົວທາງດ້ານເສດຖະກິດຂອງລາວ?

# Reference

- Keodouangkham et al., (2022). Agriculture Economics. Souphanoupovong University.